ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 375 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2022

# ຂໍ້ຕົກລົງ
## ວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມມະຕິຂອງກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 17 ພຶດສະພາ 2022 ແລະ ກອງປະຊຸມຄະນະກໍາມະການນະໂຍບາຍເງິນຕາຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 13 ພຶດສະພາ 2022.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ເພື່ອຮັບປະກັນການບໍລິຫານສະພາບຄ່ອງ ແລະ ຄວາມສ່ຽງຂອງລະບົບທະນາຄານໃຫ້ມີປະສິດທິພາບ ຄວບຄຸມຄຸນນະພາບສິນເຊື່ອໃຫ້ເຂັ້ມແຂງຍືນຍົງ ແລະ ສອດຄ່ອງກັບສະພາບເສດຖະກິດມະຫາພາກໃນປະຈຸບັນ.

**ມາດຕາ 2 ປັບປຸງອັດຕາສ່ວນເງິນແຮຝາກບັງຄັບ**

1. ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນກີບ ຈາກ 3% ມາເປັນ 5%;
2. ຮັກສາອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດໄວ້ໃນລະດັບ 5%.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ໃຫ້ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ກົມບັນຊີ ແລະ ການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນທີ 26 ພຶດສະພາ 2022 ເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 272/ທຫລ, ລົງວັນທີ 26 ພຶດສະພາ 2021.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລ

ຜູ້ວ່າການ

**ສອນໄຊ ສິດພະໄຊ**